ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

______000______

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຫ້ອງການກະຊວງ

ເລກທີ 781 /ຫ.ກ.

ວຽງຈັນ, ວັນທີ 25/ 5 /2009

# ແຈ້ງການ

ເຖິງ: ພະແນກຖະແຫລງຂ່າວ ແລະ ວັດທະນະທຳນະຄອນຫລວງ ແລະ ແຂວງຕ່າງໆໃນທົ່ວປະເທດ, ບັນດາອົງການຈັດຕັ້ງຂອງພັກ, ລັດ, ມະຫາຊົນ ແລະ ເອກະຊົນພາຍໃນ, ບຸກຄົນ, ນິຕິບຸກຄົນ, ຜູ້ຈັດພິມ, ອົງການຈັດພິມຈຳໜ່າຍປຶ້ມ-ສິ່ງພິມ ແລະ ສະມາຄົມນັກປະພັນລາວ.

ເລື່ອງ: ການຈັດທະບຽນສ້າງຕັ້ງສຳນັກພິມ ຢູ່ໃນ ສ.ປ.ປ.ລາວ.

- ອີງຕາມຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ສະບັບເລກທີ 381 /ນຍ, ລົງວັນທີ 02 / 11 / 2007.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເລກທີ 466 / ຖວ, ລົງວັນທີ 21 / 07 / 2008 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພິມຈຳໜ່າຍ.
- ອີງຕາມລັດຖະດຳລັດຂອງປະທານປະເທດ ສ.ປ.ປ.ລາວ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການພິມຈຳໜ່າຍ ສະບັບເລກທີ 240/ປປທ, ລົງວັນທີ 18/12/2008.
- ເພື່ອຄວາມເປັນລະບຽບ ແລະ ຄວາມສະດວກໃນການຄຸ້ມຄອງ, ກວດກາ, ເກັບກຳສະຖິຕິວຽກງານພິມຈຳໜ່າຍ ເວົ້າລວມ, ເວົ້າສະເພາະກໍແມ່ນເນື້ອໃນ ແລະ ຮູບແບບຂອງປຶ້ມ ແລະ ສິ່ງພິມອື່ນທີ່ຈັດພິມເພື່ອນຳເອົາໄປພິມຢູ່ໂຮງພິມ ແລະ ຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ, ຫ້ອງການກະຊວງຖະແຫລງຂ່າວ ແລະ ວັດທະນະທຳຈຶ່ງອອກແຈ້ງການສະບັບນີ້ ເພື່ອໃຫ້ຊາບ ແລະ ຈັດຕັ້ງ ປະຕິບັດຢ່າງເອກະພາບກັນດັ່ງນີ້:

1. ໃຫ້ບັນດາສຳນັກງານອົງການຂອງ ພັກ, ລັດ, ມະຫາຊົນ ແຕ່ງຕັ້ງໜ່ວຍງານບັນນາທິການ ເພື່ອກວດກາເນື້ອໃນປຶ້ມ-ສິ່ງພິມອື່ນທີ່ກ່ຽວພັນເຖິງຂະແໜງການ ຫລື ວິຊາການທີ່ຕົນຮັບຜິດຊອບ ຫລື ຖ້າມີຄວາມພ້ອມສູງກວ່ານີ້ກໍໃຫ້ແຈ້ງເຈດຈຳນົງຂອງຕົນເຖິງກົມພິມຈຳໜ່າຍ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເພື່ອສ້າງຕັ້ງສຳນັກພິມປະຈຳຂະແໜງການ ວິຊາການ.

2. ໃຫ້ບັນດາບຸກຄົນ ຫລື ນິຕິບຸກຄົນພາຍໃນ ທີ່ເຄີຍໄດ້ດຳເນີນວຽກງານກ່ຽວກັບການຈັດພິມຈຳໜ່າຍມາແລ້ວນັ້ນ ມາແຈ້ງເຈດຈຳນົງ ເພື່ອສ້າງຕັ້ງສຳນັກພິມ (ດຳເນີນວຽກງານຈັດພິມຈຳໜ່າຍ) ນຳກົມພິມຈຳໜ່າຍ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຢ່າງເປັນທາງການ.

3. ໃຫ້ບັນດາບຸກຄົນ ຫລື ນິຕິບຸກຄົນພາຍໃນ ທີ່ມີຄວາມປະສົງດຳເນີນວຽກງານການຈັດພິມຈຳໜ່າຍມາແຈ້ງເຈດຈຳນົງ ເພື່ອ ສ້າງຕັ້ງສຳນັກພິມນຳກົມພິມຈຳໜ່າຍ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຢ່າງເປັນທາງການ.

4. ຫ້າມທຸກຄົນ, ທຸກພາກສ່ວນທັງອົງການຈັດຕັ້ງພັກ, ລັດ, ມະຫາຊົນ ແລະ ເອກະຊົນດຳເນີນວຽກງານຈັດພິມຈຳໜ່າຍ ຫລື ສ້າງຕັ້ງສຳນັກພິມ ໂດຍບໍ່ໄດ້ຮັບການອະນຸຍາດ, ຖ້າພາກສ່ວນໃດ ຫລື ບຸກຄົນໃດບໍ່ມາແຈ້ງ ຫລື ລະເມີດ; ຫາກກວດພົບຕາມພາຍ ຫລັງ ຈະຖືວ່າຜິດລະບຽບການຄຸ້ມຄອງ ແລະ ຈະໃຊ້ມາດຕະການ ຕາມລະບຽບກົດໝາຍ.

5. ການແຈ້ງເຈດຈຳນົງຕ້ອງມີໃບຄຳຮ້ອງ, ແລະ ແຈ້ງເຈດຈຳນົງວ່າເປັນສຳນັກພິມປຶ້ມ-ສິ່ງພິມຂະແໜງການໃດທີ່ຕົນເປັນເຈົ້າ ຂອງ, ໂຄງຮ່າງການຈັດຕັ້ງຂອງສຳນັກພິມ, ບົດວິພາກເສດຖະກິດ, ແຜນຄາດຄະເນຫົວເລື່ອງປຶ້ມ-ສິ່ງພິມທີ່ຈະຈັດພິມຈຳໜ່າຍປະຈຳປີ, ຂົງເຂດການຈັດພິມ ແຜນວາດທີ່ຕັ້ງຂອງສຳນັກພິມ, ຊີວະປະຫວັດ, ໃບຮັບປະກັນຄຸນນະວຸດດ້ານການສຶກສາ ແລະ ດ້ານການຈັດຕັ້ງ ພ້ອມທັງປະສົບການໃນການບໍລິຫານຂອງຜູ້ອຳນວຍການສຳນັກພິມ.

6. ຖ້າຫາກມີຄວາມສົນໃຈ ໃຫ້ຕິດຕໍ່ບົວພັນກົມພິມຈຳໜ່າຍ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໂທ: 212421, 212422, 223129 ໃນວັນ ເວລາ ທາງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮອງຫົວໜ້າຫ້ອງການກະຊວງ

ອົບທອງ ນະໂບທຳ